| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວບໍລິການໂຮງໝໍເອກະຊົນ |
| **ປະເພດເອກະສານ** | ໃບອະນຸຍາດດໍາເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 26.01.2018 |
| **ພາກສ່ວນຮັບຜິດຊອບ** | ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ |
| **ເງື່ອນໄຂໃນການຂໍເອກະສານ** | (1) ຂະໜາດໂຮງໝໍເອກະຊົນ:ໂຮງໝໍເອກະຊົນຕ້ອງປະກອບ ອຸປະກອນການແພດ, ຕຽງນອນ, ຜູ້ປະກອບວິຊາຊີບປິ່ນປົວຕາມລະດັບຂັ້ນຂອງໂຮງໝໍເອກະຊົນ ແລະ ຕາມເງື່ອນໄຂມາດຕະຖານດັ່ງນີ້:- ຂັ້ນ 1: ໂຮງໝໍຂະໜາດໃຫຍ່ຫລາຍກວ່າ 100 ຕຽງນອນຂຶ້ນເມືອ ໃນລະດັບການປິ່ນປົວຂັ້ນສູງສຸດ- ຂັ້ນ 2: ໂຮງໝໍຂັ້ນກາງ 51-100 ຕຽງ ໃນລະດັບການປິ່ນປົວຂັ້ນສູງ- ຂັ້ນ3: ໂຮງໝໍຂະໜາດນ້ອຍ 30-50 ຕຽງ ໃນລະດັບການປິ່ນປົວຂັ້ນກາງ.(2) ບຸກຄະລາກອນໂຮງໝໍເອກະຊົນ:- ຜູ້ອໍານວຍການຝ່າຍວິຊາການແພດຂອງໂຮງໝໍເອກະຊົນ ທີ່ຕ່າງປະ ເທດມາລົງທຶນດໍາເນີນກິດຈະການໂຮງໝໍເອກະຊົນ ຕ້ອງມີທ່ານໝໍທີ່ເປັນສັນຊາດລາວ ຢ່າງໜ້ອຍ 01 ທ່ານ ທີ່ມີເງື່ອນໄຂ, ມາດຕະຖານທາງດ້ານວິຊາການ ແລະ ປະສົບການດ້ານການປິ່ນປົວ 10 ປີຂຶ້ນໄປ ເປັນພະນັກງານບໍານານ ຫຼື ບໍານັດ.- ວິຊາຊີບປິ່ນປົວທີ່ເຮັດວຽກໃນໂຮງໝໍເອກະຊົນ ທັງຄົນລາວ ແລະ ຄົນຕ່າງປະເທດ ຕ້ອງມີໃບຢັ້ງຢືນວິຊາຊີບປິ່ນປົວທີ່ອອກໃຫ້ໂດຍ ກະຊວງສາທາລະນະສຸກ.- ການນໍາເອົາຜູ້ປະກອບວິຊາຊີບປິ່ນປົວ, ນັກເຕັກນິກອື່ນໆທີ່ເປັນຄົນຕ່າງປະເທດເຂົ້າມາປະຕິບັດວິຊາການໃນໂຮງໝໍເອກະຊົນ ອະນຸຍາດໃຫ້ບໍ່ເກີນ 20% ຂອງຈໍານວນທັງໝົດ.- ການບັນຈຸພະນັກງານເຂົ້າໃນໂຮງໝໍເອກະຊົນ ມີດັ່ງນີ້:* ຂັ້ນ 1: ຈໍານວນພົນໃນອັດຕາ 2,5-3 ຄົນຕໍ່ຕຽງ, ທ່ານໝໍ 1ຄົນ ຕໍ່ພະຍາບານ 4-5 ຄົນ, ທ່ານໝໍ 1 ຄົນ ຕໍ່ 4 ຕຽງ.* ຂັ້ນ 2: ຈໍານວນພົນໃນອັດຕາ 2-2, 5-3 ຄົນຕໍ່ຕຽງ, ທ່ານໝໍ 1 ຄົນ ຕໍ່ພະຍາບານ 5 ຄົນ, ທ່ານໝໍ 1 ຄົນ ຕໍ່ 5 ຕຽງ* ຂັ້ນ 3: ຈໍານວນພົນໃນອັດຕາ 1,8 – 2 ຄົນຕໍ່ຕຽງ, ທ່ານໝໍ 1 ຄົນ ຕໍ່ພະຍາບານ 3-4ຄົນ, ທ່ານໝໍ 1 ຄົນ ຕໍ່ 5 ຕຽງ.(3) ເງື່ອນໄຂ ແລະ ມາດຕະຖານໂຮງໝໍເອກະຊົນ:- ການລົງທຶນຂອງຕ່າງປະເທດສາມາດຮ່ວມທຶນຈົດທະບຽນຮ່ວມກັບ ບຸກຄົນ, ນິຕິບຸກຄົນ ພາຍໃນປະເທດ ເພື່ອຂໍອະນຸຍາດດໍາເນີນກິດຈະການໂຮງໝໍເອກະຊົນ ຕ້ອງມີອັດຕາສ່ວນການລົງທຶນຫຼາຍກວ່າ 49% ຂຶ້ນໄປຂອງທຶນທັງໝົດໃນການສ້າງຕັ້ງໂຮງໝໍເອກະຊົນ.- ສະຖານທີ່ຕັ້ງຂອງໂຮງໝໍເອກະຊົນຕ້ອງຢູ່ຫ່າງຈາກບ້ານປະຊາຊົນ ຢ່າງຫນ້ອຍ 30-50 ແມັດ, ມີຮົ້ວ ຫຼື ກໍາແພງຮອບແດນ, ມີລະບົບບໍາບັດນໍ້າເສຍ, ຮັບປະກັນນໍ້າເປື້ອນ ໃຫ້ອອກສູ່ລະບົບລະບາຍນໍ້າເສຍຂອງຕົວເມືອງ, ມີລະບົບກໍາຈັດທໍາລາຍສິ່ງທີ່ເປິະເປື້ອນ, ຮັບປະກັນບໍ່ໃຫ້ມີຜົນສະທ້ອນດ້ານມົນລະພິດເຖິງຜູ້ຢູ່ໃກ້ຄຽງ ແລະ ສະພາບແວດລ້ອມ.- ເນື້ອທີ່ດິນປຸກສ້າງໂຮງໝໍເອກະຊົນ:* ຂັ້ນ 1: ເນື້ອທີ່ດິນປຸກສ້າງບໍ່ຕໍ່າກ່ວາ 5.000 ຕາແມັດ, ອາຄານສູງບໍ່ເກີນ 5 ຊັ້ນ, ຕັ້ງຢູ່ເທດສະບານຂອງແຂວງໃຫຍ່.* ຂັ້ນ 2: ເນື້ອທີ່ດິນປຸກສ້າງບໍ່ຕໍ່າກ່ວາ 4.000 ຕາແມັດ, ອາຄານສູງບໍ່ເກີນ 4 ຊັ້ນ, ຕັ້ງຢູ່ເທດສະບານຂອງແຂວງທີ່ບໍ່ໃຫຍ່.* ຂັ້ນ 3: ເນື້ອທີ່ດິນປຸກສ້າງບໍ່ຕໍ່າກ່ວາ 3.000 ຕາແມັດ, ອາຄານສູງບໍ່ເກີນ 2 ຊັ້ນ, ຕັ້ງຢູ່ບັນດາເມືອງຕ່າງໆ. |

| ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ຄຳແນະນຳການຈັດຕັ້ງປະຕິບັດດຳລັດວ່າດ້ວຍໂຮງໝໍເອກະຊົນ | 1333/ສທ | 16.11.2017 | |
| ໜັງສືແນະນຳກ່ຽວກັບຄຳແນະນຳການຈັດຕັ້ງປະຕິບັດ ເລກທີ 1333/ສທ | 2928/ກປຝ | 28.12.2018 | |
| ດຳລັດ ວ່າດ້ວຍໂຮງໝໍເອກະຊົນ | 151/ລບ | 28.04.2014 | ມາດຕາ 6 ແລະ ມາດຕາ 10ໝວດທີ 4 ການຂໍອະນຸຍາດດຳເນີນກິດຈະການໂຮງ (ມາດຕາ 15 ຫາມາດຕາ 17) |
| ກົດໝາຍວ່າດ້ວຍ ການປິ່ນປົວ (ສະບັບປັບປຸງ) | 58/ສພຊ | 24.12.2014 | ມາດຕາ 20 |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າຫນ້າທີ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມປິ່ນປົວ ແລະ ຟື້ນຟູໜ້າທີການ, ກະຊວງສາທາລະນະສຸກ | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 30 | |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 60 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ແລ້ວສະເໜີຂໍຕໍ່ນຳກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກະຊວງສາທາລະນະສຸກ ແລະ ຈະຕໍ່ໃຫ້ແຕ່ຜູ້ທີ່ເຄືອນໄຫວຖືກຕ້ອງເທົ່ານັ້ນ. |

| ຄ່າທຳນຽມສຳລັບການຍື່ນຂໍເອກະສານ | | | | |
|---|---|---|---|---|
| **ມີຄ່າໃບຄຳຮ້ອງ ຫຼື ບໍ່ ?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມ ຄຳຮ້ອງ** | **ຄ່** |
| ມີ | 0.00 | 0.00 | 0.00 | |
| **Comments** | ອີງຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ, ເລກທີ 003/ປປທ, ຄ່າທຳນຽມໃນການອອກໃ<br>ຕາມຂັ້ນຂອງໂຮງໝໍຄື: 1. ຂັ້ນ 1 = 1.500.000 ກີບ2. ຂັ້ນ 2 = 400.000ກີບ3. ຂັ້ນ 3 = 200.000 | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | |
| **ຄຳ ເຫັນຄ່າ ທຳ ນຽມເພີ່ມເຕີມ** | | | | |

| ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | |
| ມີ | 0.00 | 0.00 | 0.00 | |
| **ຄຳເຫັນ** | ອີງຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ, ເລກທີ 003/ປປທ, ຄ່າທຳນຽມໃນການອອກໃ<br>ຕາມຂັ້ນຂອງໂຮງໝໍຄື: 1. ຂັ້ນ 1 = 1.500.000 ກີບ2. ຂັ້ນ 2 = 400.000ກີບ3. ຂັ້ນ 3 = 200.000 | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |

| | | | | |
|---|---|---|---|---|
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | |
| **ຄໍາ ເຫັນກ່ຽວກັບຄ່າທໍາ<br>ນຽມຕໍ່ອາຍຸເພີ່ມເຕີມ** | | | | |